**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****************

ກະຊວງໂຍທາທິການ ແລະ ຂົນສົ່ງ

ການບິນລາວ Lao Airlines

140

ເລກທີ............/ກບລ.

# ໜັງສືແຈ້ງເຊີນເຂົ້າຮ່ວມການປະມູນ

ຮຽນ : ບັນດາ ບໍລິສັດ , ວິສາຫະກິດ,ຮ້ານອາຫານ, ໂຮງງານຜະລິດເຂົ້າໜົມຕ່າງໆ ທີ່ນັບຖື.

ເລື່ອງ: ປະມູນເປີດກ້ວາງຜູ້ສະໜອງ ເຄື່ອງອຸປະໂພກ-ບໍລິໂພກເທິງເຮືອບິນຂອງການບິນລາວ.

ລັດວິສາຫະກິດການບິນລາວ ຂໍຖືເປັນກຽດ ແຈ້ງມາຍັງບັນດາບໍລິສັດ, ວິສາຫະກິດ, ຮ້ານອາຫານ ຊາບວ່າ: ພວກເຮົາ ມີຄວາມຕ້ອງການ ຄັດເລືອກຜູ້ສະໜອງ ເຄື່ອງ ອຸປະໂພກ-ບໍລິໂພກ ເທິງເຮືອບິນ ເພື່ອຮັບໃຊ້ການບໍລິການຜູ້ໂດຍສານເທິງເຮືອບິນຂອງການບິນລາວ; ຈິ່ງແຈ້ງເຊີນມາຍັງບັນດາທ່ານ ທີ່ມີຄວາມສົນໃຈ ເຂົ້າຮ່ວມການປະມູນ. ເຊິ່ງປະກອບມີລາຍລະອຽດດັ່ງນີ້ :

I. ໝວດທີ່ 01 : ປະເພດອາຫານ (ເບີ01)

+ ອາຫານຊັ້ນທຸລະກິດ (BC) : ອາຫານເຊົ້າ , ອາຫານທ່ວາງ , ອາຫານແລງ ແລະ ອາຫານພິເສດ ( VGML, SFML, MOML , AVML, CHML, BBML,DBML, ... )

+ ອາຫານຊັ້ນປະຢັດ (YC): ອາຫານເຊົ້າ , ອາຫານທ່ວາງ , ອາຫານແລງ ແລະ ອາຫານພິເສດ ( VGML, SFML, MOML , AVML, CHML, BBML,DBML, ... )

** ໄລຍະເວລາບິນ: 50ນາທີ-120ນາທີ ( ສາຍພາຍໃນແລະຕ່າງປະເທດ )

121 ນາທີ ເຖິງ 5ຊົ່ວໂມງ ( ສາຍຕ່າງປະເທດ )

II. ໝວດທີ່ 02 : ~~ປະເພດ~~ປະເພດເຄື່ອງດື່ມ (ເບີ02)

+ ນ້ຳດື່ມ, ເປບຊີ, ເບຍ,ໂສດາ **( ສັນຍາໝົດກຳນົດ13/08/2021)**

+ ນ້ຳໝາກໄມ້ , ນົມສົດ, ນົມດັດສະມິວ ...

+ ປະເພດເຫຼົ້າ : ວາຍ, ວິສສະກີ, ໂວນກາ, ຊຳແປນ ...

+ ຊາ, ກາເຟ, ຄີມ, ນ້ຳຕານ

III. ໝວດທີ່ 03 : ປະເພດອຸປະກອນຮັບໃຊ້ເທິງເຮືອບິນ

+ ເຄື່ອງໃຊ້ປະຈຳວັນ : ຖົງຢາງ, ຜ້າຂົນໜູ, ນ້ຳຫອມຝຣັ່ງ, ບ່ວງສຳເລັດຮູບ,ເຈ້ຍເຊັດຕ່າງໆ ...

+ ອຸປະກອນເຄື່ອງຮັບໃຊ້ຍາວນານ :

- ສໍາລັບຊັ້ນທຸລະກິດ : ພະຖາດໃສ່ອາຫານ, ຖ້ວຍສະລັດເຊລິມິກ, ຈອກດື່ມເຊລະມິກ, ຈານໃສ່ອາຫານຮ້ອນເຊລະມິກ , ຈານຮອງຖ້ວຍຮ້ອນ ...
- ສໍາລັບຊັ້ນປະຢັດ : ພະຖາດໃສ່ອາຫານ, ຖ້ວຍສະລັດຢາງ, ຈອກຢາງ, ຈານຮອງຖ້ວຍຮ້ອນ ...

ເຊິ່ງມີລາຍລະອຽດດັ່ງນີ້ :

- ຊອງປະມູນແມ່ນເລີ່ມຂາຍ ວັນທີ 03/08/2019 ຮອດວັນທີ 10/8/2019 ປິດຂາຍຊອງ.
- ວັນທີ່ 12/8/2019 ເປີດຊອງປະມູນ ໝວດ ທີ່ 01 ເວລາ 09:00
- ວັນທີ່ 13/8/2019 ເປີດຊອງປະມູນ ໝວດ ທີ່ 03 ເວລາ 09:00
- ວັນທີ່ 14/8/2019 ເປີດຊອງປະມູນ ໝວດ ທີ່ 02 ເວລາ 09:00
- ເບີຕິດຕໍ່: +856 21 513150-54
- ພິວພັນ ຊື້ຊອງປະມູນໄດ້ທີ່ຫ້ອງການບໍລິຫານ ລັດວິສາຫະກິດການບິນລາວ(ສະໜາມບິນສາກົນວັດໄຕ)
- ລາຄາຊອງປະມູນ 50,000 ກີບ/1 ຊອງ.

ສະຖານທີ່ເປີດຊອງປະມູນ ແມ່ນ ສໍານັກງານໃຫ່ຍ ລັດວິສາຫະກິດການບິນລາວ ຊັ້ນ **4** ບ້ານ ເມືອງວາທີ່ງ ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ ( ສະໜາມບິນສາກົນວັດໄຕ).

ດັ່ງນັ້ນ, ຈຶ່ງໄດ້ອອກແຈ້ງເຊີນມາຍັງທຸກພາກສ່ວນ ທີ່ມີຄວາມຄວາມສົນໃຈ ເຂົ້າຮ່ວມປະມູນໃນຄັ້ງນີ້ດ້ວຍ.

ນະຄອນຫຼວງວຽງຈັນ, ວັນທີ 02/8/2019

**ຜູ້ອໍານວຍການໃຫຍ່**

ບໍລິສັດ ລັດວິສາຫະກິດການບິນລາວ LAO AIRLINES

**ບຸນມາ ຈັນທະວົງສາ**